# ຂໍເອົາເງິນຂອງທ່ານຄືນມາ

ທ່ານອາດມີສິດໄດ້ຮັບເງິນພາສີຄືນສູງເຖິງ
$6,000 ຫຼືຫຼາຍກວ່ານັ້ນ ເມື່ອທ່ານທວງເອົາ
ເຄຣດິດພາສີລາຍໄດ້ທີ່ມາຈາກວຽກ ແລະເຄຣດິດພາສີເດັກ
(Earned Income Tax Credit and Child Tax Credit)

## 1 ເບິ່ງສະຖານທີ່ບໍລິການດ້ານພາສີຟຣີ*

ເບິ່ງທີ່ເວັບໄຊ irs.treasury.gov/freetaxprep
ຫຼືໂທຣ 800-906-9887.

## 2 ເບິ່ງວ່າ ທ່ານມີສິດຫຼືບໍ່

ເບິ່ງວ່າທ່ານສາມາດຮັບເອົາເງິນໄດ້ຫຼາຍປານໃດທີ່ເວັບໄຊ
eitcoutreach.org/help.

## 3 ຍື່ນເສັຽພາສີຂອງທ່ານ

ໄປທີ່ສະຖານທີ່ບໍລິການດ້ານພາສີຟຣີພາຍໃນວັນທີ 17
ເມສາເພື່ອຍື່ນເສັຽພາສີຂອງທ່ານ ແລະ ຮັບເອົາເງິນຂອງທ່ານໃນ
ຮູບແບບເງິນພາສີຄືນ.

* ທ່ານຍັງສາມາດຂໍເອົາເຄຣດິດພາສີໄດ້ ຖ້າວ່າ ທ່ານບໍ່ສາມາດ ຫາສະຖານ
ທີ່ບໍລິການດ້ານພາສີຟຣີທີ່ຢູ່ໃກ້ທ່ານໄດ້.

*ທ່ານຈະຍື່ນເສັຽພາສີຂອງທ່ານເມື່ອໃດ?*

ວັນທີ: ເວລາ:

ສະຖານທີ່: ເບີໂທຣະສັບ:

ສໍາລັບຂໍ້ມູນເພີ່ມເຕີມ, ເບິ່ງທີ່ເວັບໄຊ eitcoutreach.org/help ຫຼື ໂທຣ IRS ທີ່ເບີໂທຣ
1-800-829-1040.

GET IT BACK LA

# ຂ້ອຍມີສິດບໍ່?

ເຄຣດິດພາສີລາຍຮັບທີ່ມາຈາກວຽກ ແລະເຄຣດິດພາສີເດັກ ແມ່ນການຊ່ວຍເຫຼືອດ້ານພາສີ ສຳລັບບຸກຄົນທີ່ເຮັດວຽກ. ທ່ານສາມາດເປັນໜີ້ພາສີໜ້ອຍລົງ ແລະອາດໄດ້ຮັບເງິນສົດ ກັບຄືນກໍໄດ້!

ການຂໍເອົາເຄຣດິດເຫຼົ່ານີ້ຈະບໍ່ສົ່ງຜົນກະທົບຕໍ່ສິດທິໄດ້ຮັບຂອງທ່ານສຳລັບການຊ່ວຍເຫຼືອອື່ນໆ ເຊັ່ນ SNAP (ບັດຊື້ອາຫານ), SSI, Medicaid, ການຊ່ວຍເຫຼືອເງິນສົດ, ຫຼື ການຊ່ວຍເຫຼືອດ້ານເຮືອນຫຼວງ. ຖ້າວ່າ ທ່ານໄດ້ເງິນພາສີຄືນ, ມັນຈະບໍ່ຖືກນັບໃສ່ຈຳນວນຊັບສິນ/ແຫຼ່ງເງິນທີ່ກຳນົດໄວ້ຂອງໂຄງການຊ່ວຍເຫຼືອຕ່າງໆ ທີ່ໄດ້ທຶນຈາກຣັຖບານກາງ ສຳລັບໄລຍະ 12 ເດືອນ ຫຼັງຈາກໄດ້ຮັບເງິນພາສີຄືນແລ້ວ.

## ຖ້າວ່າ ທ່ານມີລູກ

- ☐ **ອາຍຸ**: ສຳລັບ *EITC*, ເດັກຕ້ອງມີອາຍຸຕໍ່າກວ່າ 19 ປີ ໃນທ້າຍປີ 2017 (ນັກຮຽນເຕັມເວລາຕ້ອງມີອາຍຸຕໍ່າກວ່າ 24 ປີ, ແລະບໍ່ຈຳກັດອາຍຸ ສຳລັບເດັກທີ່ພິການຖາວອນ). ສຳລັບ *CTC*, ເດັກຕ້ອງມີອາຍຸຕໍ່າກວ່າ 17 ປີ ໃນທ້າຍປີ 2017.
- ☐ **ການຢູ່ອາໄສ**: ເດັກຕ້ອງອາໄສຢູ່ກັບທ່ານເປັນເວລາດົນກວ່າເຄິ່ງປີຂອງປີ 2017.
- ☐ **ລາຍໄດ້ສຳລັບປີ** 2017: ສຳລັບ *CTC*, ຖ້າວ່າ ທ່ານມີລາຍໄດ້ຫຼາຍກວ່າ $3,000, ທ່ານສາມາດຂໍເອົາເຄຣດິດໄດ້ເຖິງ $1,000 ຕໍ່ເດັກໜຶ່ງຄົນ.

ສຳລັບ *EITC*, ລາຍຮັບຂອງທ່ານຕ້ອງຕໍ່າກວ່າຈຳນວນທີ່ກຳນົດໄວ້ຂ້າງລຸ່ມນີ້:

| ເດັກ | ໂສດ | ແຕ່ງງານ | EITC ສູງເຖິງ: |
|---|---|---|---|
| 1 | $39,617 | $45,207 | $3,400 |
| 2 | $45,007 | $50,597 | $5,616 |
| 3 ຄົນຂຶ້ນໄປ | $48,340 | $53,930 | $6,318 |

### ສິ່ງທີ່ຄວນຖືເອົາໄປທີ່ ສະຖານບໍລິການພາສີຟຣີ

- ຮູບປະຈຳຕົວທີ່ໃຊ້ການໄດ້
- ບັດປະກັນສັງຄົມ (Social Security Card), ຈົດໝາຍຢັ້ງຢືນເລກປະກັນສັງຄົມ (Social Security Number verification letter), ຫຼື ITIN
- ຟອມ W-2 ຫຼື 1099
- ຫຼັກຖານຢັ້ງຢືນປະກັນສຸຂະພາບ (ຟອມ 1095-A, 1095-B, ຫຼື 1095-C)

## ຖ້າວ່າ ທ່ານບໍ່ມີລູກ

- ☐ **ອາຍຸ**: ທ່ານຕ້ອງມີອາຍຸລະຫວ່າງ 25 ຫາ 64 ປີ.
- ☐ **ລາຍໄດ້ສຳລັບປີ** 2017: ຖ້າວ່າທ່ານມີລາຍໄດ້ໜ້ອຍກວ່າ $15,010 ($20,600 ຖ້າວ່າແຕ່ງງານ), ທ່ານສາມາດຮັບເອົາ ເງິນຄືນ EITC ໄດ້ເຖິງ $510.

## ຖ້າວ່າ ທ່ານບໍ່ແມ່ນພົນລະເມືອງ ສະຫະຣັຖອາເມລິກາ

- ☐ EITC: ທ່ານ, ຄູ່ສົມລົດຂອງທ່ານ, ແລະລູກຄົນໃດໆ ທີ່ທ່ານຂໍເງິນພາສີຄືນ ຕ້ອງມີເລກປະກັນສັງຄົມທີ່ໃຊ້ການໄດ້.
- ☐ CTC: ທ່ານ, ຄູ່ສົມລົດຂອງທ່ານ, ແລະລູກຄົນໃດໆ ທີ່ທ່ານຂໍເງິນພາສີຄືນຕ້ອງມີເລກປະກັນສັງຄົມ ຫຼື ເລກປະຈຳຕົວຜູ້ເສັຽພາສີບຸກຄົນ (ITIN).

## ປະກັນໄພສຸຂະພາບ

ຖ້າວ່າ ທ່ານບໍ່ມີປະກັນໄພສຸຂະພາບ, ເຄຣດິດພາສີພິເສດ (Premium Tax Credit) ອາດຊ່ວຍຄຸ້ມຄອງ ຈ່າຍຄ່າສ່ວນຫຼາຍຂອງແຜນສຸຂະພາບໄດ້! ລົງທະບຽນລະຫວ່າງວັນທີ 1 ເດືອນພະຈິກ 2017 ເຖິງ 15 ທັນວາ 2017. ບາງຄົນທີ່ບໍ່ມີປະກັນພັຍອາດມີໂທດ. ຂໍ້ມູນຕື່ມທີ່ 1-800-318-2596 ຫຼື www.HealthCare.gov.